# ທຄຕລ ສາຂາ ອັດຕະປື ສຳເລັດພິທີມອບ - ຮັບ ໂຄງການກໍ່ສ້າງ ໂຮງຮຽນມູນລະປະຖົມຄອກງົວ ບ້ານໃຫຍ່ໝື່ນຫົວເມືອງ, ເມືອງສາມັກຄີໄຊ, ແຂວງອັດຕະປື

ໃນຕອນເຊົ້າ ຂອງວັນທີ 07/01/2022, ທີ່ໂຮງຮຽນມູນລະປະຖົມຄອກງົວ ບ້ານໃຫຍ່ໝື່ນຫົວເມືອງ, ເມືອງສາມັກຄີໄຊ, ແຂວງອັດຕະປື ທຄຕລ ສາຂາອັດຕະປື ໄດ້ມີການຈັດພິທີມອບ - ຮັບ **ໂຄງການກໍ່ສ້າງ ໂຮງຮຽນມູນລະປະຖົມຄອກງົວ ບ້ານໃຫຍ່ໝື່ນຫົວເມືອງ, ເມືອງສາມັກຄີໄຊ, ແຂວງອັດຕະປື** ຂຶ້ນຢ່າງເປັນທາງການ, ໂດຍການເປັນປະທານຂອງ **ທ່ານ ພິທູນ ມະອິງສາ** ຄະນະປະຈຳພັກເມືອງ ຮອງເຈົ້າເມືອງງສາມັກຄີໄຊ, ມີທ່ານ **ອຸດົມສິນ ສີຊານິນ** ກຳມະການພັກແຂວງ, ຫົວໜ້າພະແນກສຶກສາທິການ ແລະ ກິລາ ແຂວງອັດຕະປື, ບັນດາຫົວໜ້າຫ້ອງການຕ່າງໆອ້ອມຂ້າງເມືອງ, ບັນດາຄູອາຈານ, ນ້ອງນັກຮຽນ ແລະ ອຳນາດການປົກຄອງບ້ານ ເຂົ້າຮ່ວມຢ່າງພ້ອມພຽງ.



***ພາບຫ້ອງຮຽນກ່ອນການຊ່ວຍເຫຼືອປີ 2020***



***ພາບຫ້ອງຮຽນພາຍຫຼັງການຊ່ວຍເຫຼືອປີ 2021***

ທຄຕລ ຍາມໃດກໍ່ໄດ້ຖືວຽກງານການສຶກສາ ເປັນວຽກງານໜຶ່ງທີ່ມີຄວາມສຳຄັນຕໍ່ກັບການພັດທະນາຊັບພະຍາກອນມະນຸດຂອງປະເທດຊາດ, ຍ້ອນການເລັງເຫັນໄດ້ເຖິງຄວາມສຳຄັນຂອງວຽກງານການສຶກສາ, ໃນນັ້ນໂຮງຮຽນມູນລະປະຖົມຄອກງົວ ກໍ່ເປັນໂຮງຮຽນໜຶ່ງທີ່ຍັງຂາດເຂີນທາງດ້ານຫ້ອງຮຽນ ແລະ ອຸປະກອນການຮຽນການສອນ ເນື່ອງຈາກອາຄານເດີມ ເປັນໂຕງໄມ້ທີ່ເປ່ເພເສຍຫາຍ ບໍ່ໄດ້ມາດຕະຖານ ເຊິ່ງສ້າງຄວາມຫຍຸ້ງຍາກ ແລະ ເຮັດໃຫ້ການຮໍ່າຮຽນຂອງນ້ອງນັກຮຽນບໍ່ໄດ້ຮັບປະສິດພາບເທົ່າທີ່ຄວນ.

ການສົມທົບທຶນຊ່ວຍເຫຼືອໃນການກໍ່ສ້າງ ໂຮງຮຽນມູນລະປະຖົມຄອກງົວ ບ້ານໃຫຍ່ໝື່ນຫົວເມືອງ, ເມືອງສາມັກຄີໄຊ, ແຂວງອັດຕະປື ຄັ້ງນີ້ກໍ່ແມ່ນໜຶ່ງໃນ ໂຄງການຊ່ວຍເຫຼືອສັງຄົມຂອງ ທຄຕລ ໂດຍການນຳສະເໜີ ແລະ ເປັນເຈົ້າການຕິດຕາມໂຄງການຂອງ ທຄຕລ ສາຂາ ອັດຕະປື.




ການກໍ່ສ້າງ ໂຮງຮຽນມູນລະປະຖົມຄອກງົວ ບ້ານໃຫຍ່ໝື່ນຫົວເມືອງ, ເມືອງສາມັກຄີໄຊ, ແຂວງອັດຕະປື ໄດ້ເລີ່ມກໍ່ສ້າງແຕ່ຕົ້ນປີ 2021 ເປັນຕົ້ນມາ ແລະ ໄດ້ສຳເລັດການກໍ່ສ້າງໃນເດືອນ 10 ປີ 2021, ລວມມູນຄ່າການກໍ່ສ້າງທັງໝົດ 85.143.000 ກີບ. ນອກຈາກນີ້ ທຄຕລ ສາຂາອັດຕະປື ຍັງໄດ້ປະກອບສ່ວນອຸປະກອນການຮຽນ ເປັນຕົ້ນແມ່ນ: ປຶ້ມຂຽນ, ບິກ, ສໍ... ລວມມູນຄ່າທັງໝົດ 1.500.000 ກີບ.




**ໃນຕອນທ້າຍຂອງພິທີ** ທ່ານ ພິທູນ ມະວົງສາ ຄະນະປະຈຳພັກເມືອງ ຮອງເຈົ້າເມືອງໆສາມັກຄີໄຊ ໄດ້ຕາງໜ້າໃຫ້ແກ່ອົງການຈັດຕັ້ງທ້ອງຖິ່ນ ກໍ່ຄື ນ້ອງນັກຮຽນ ແລະ ຄູອາຈານ ກ່າວຮັບເອົາໂຄງການດັ່ງກ່າວ ພ້ອມທັງສະແດງຄວາມຂອບໃຈເປັນຢ່າງສູງມາຍັງ ທຄຕລ ສາຂາ ອັດຕະປືທີ່ໄດ້ໃຫ້ຄວາມຊ່ວຍເຫຼືອໃນຄັ້ງນີ້.

***ຂຽນຂ່າວໂດຍ: ນ. ອິ່ນະບັນ ຕານຈັນທູນ***

***ຖ່າຍພາບໂດຍ: ທ. ເທວາ ອຸດທິຈັນທະເດດ***